ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ວຽກບ້ານ

ວິຊາ: ສິ່ງແວດລ້ອມ

ຫົວຂໍ້: ສະພາບການປ່ຽນແປງຂອງປະຊາກອນລາວ

ນຳພາໂດຍ: ອ. ຈ ປິ່ນແກ້ວ

ຂຽນໂດຍ: ທ. ໄຊສົມພອນ ເພັງພູມສະຫວັດ

ຫ້ອງ: 2/2

**ສົກຮຽນ 2007. 2008**

# ວຽກບ້ານວິຊາສິ່ງແວດລ້ອມ

## ຫົວຂໍ້: ການປ່ຽນແປງສະພາວະປະຊາກອນໂລກ

I. ເຊື້ອຊາດ- ຊົນເຜົ່າ

ຊາດລາວກໍ່ແມ່ນຊາດໜຶ່ງທີ່ເກົ່າແກ່ ຊຶ່ງມີທີ່ຕັ້ງພູມລຳເນົາຢູ່ແຫລມອິນດູຈີນແຕ່ງນີ້ມາຕັ້ງແຕ່ສະໄໝບູຮານ ຈົນມາຮອດສະໄໝປັດຈຸບັນບໍ່ຕ່ຳກວ່າ 2500ປີມາແລ້ວໂດຍອີງຕາມທີ່ຕັ້ງພູມລຳເນົາຂອງແຕ່ລະຊົນເຜົ່າໃຫຍ່ທີ່ຕັ້ງຖິ່ນຖານທຳມາຫາກິນຢ່າງເປັນຫລັກເປັນແຫລ່ງນັ້ນ, ປະຊາຊົນລາວ (ຊາດລາວ) ຈຶ່ງຖືກຈັດແບ່ງອອກເປັນ 3 ກຸ່ມໃຫຍ່ ແລະມີຊື່ເອີ້ນຕາມກຸ່ມຕ່າງກັນ.ໃນ 3 ກຸ່ມໃຫຍ່ນີ້ປະກອບມີ 68 ເຜົ່າຊົນນ້ອຍ.ແຕ່ຍ້ອນມີການສຳຫລວດ ແລະສຶກສາຄົ້ນຄວ້າກ່ຽວກັບຊົນເຜົ່າຢູ່ໃນລາວມາໂດຍຕະຫລອດ. ມາຮອດປີ 1985. ສະຖິຕິຈຶ່ງມີການປ່ຽນແປງຈາກ 68 ເຜົ່າມາເປັນ 47 ເຜົ່າ. ແຕ່ຍັງເຫັນວ່າສະຖິຕິນີ້ຍັງບໍ່ທັນແນ່ນອນ ແລະກໍ່ຍັງມີການຄົ້ນຄວ້າໄປເລື້ອຍໆ. ມາຮອດປີ 2000 ທາງອີງການທີ່ກ່ຽວຂ້ອງຈຶ່ງໄດ້ມີການສັບຊ້ອນແລະຈັດແບ່ງກຸ່ມ. ເຜົ່າຊົນຄືນໃໝ່. ສະນັ້ນສະຖິຕິຊົນເຜົ່າຈາກ 47 ມາເປັນ 49 ເຜົ່າ. ສ່ວນການຈັດແບ່ງຊົນເຜົ່າອອກເປັນ 3 ກຸ່ມໃຫຍ່ນັ້ນ ແມ່ນເພິ່ນອີງຕາມກຸ່ມທີ່ໃຊ້ພາສາໃນຕະກຸນດຽວກັນ ມາເປັນບ່ອນອີງໃນການຈັດ ກຸ່ມເພື່ອໃຫ້ມີການສຶກສາຄົ້ນຄວ້າໄດ້ງ່າຍ ແລະເປັນລະບົບດີຄືດັ່ງນີ້:

1.ກຸ່ມໄຕ-ລາວ

ກຸ່ມໄຕ-ລາວ ແມ່ນພາກສ່ວນໜຶ່ງຂອງເຊື້ອຊາດອາຊີ, ໄດ້ຕັ້ງຖິ່ນຖານທຳມາຫາກິນເປັນຫລັກແຫລ່ງຢູ່ໃນເຂດອາຊີຕາເວັນອອກສ່ຽງໃຕ້ ແລະມີຈຳນວນຫລາຍ ໃນໄລຍະຜ່ານມາພວກເຮົາເຄີຍເອີ້ນວ່າ "ລາວລຸ່ມ"ມາຮອດສະຕະວັດທີ່ VIIIພວກໄຕ-ລາວນັບມື້ນັບແຜ່ຂະຫຍາຍຈົນສາມາດກ້າວຂຶ້ນສູ່ການສະຖາປະນາຕົນເປັນເຈົ້າປົກຄອງແຫ່ງນີ້ຢ່າງສິ້ນເຊີງ,ໂດຍແມ່ນຂຸນລໍ ເປັນເຈົ້າປົກຄອງອານາຈັກເມືອງຊົວ

ກຸ່ມໄຕ-ລາວເປັນກຸ່ມຊົນທີ່ໃຫຍ່ກວມປະມານ 68% ຂອງພົນລະເມືອງທັງໝົດເຊິ່ງປະກອບດ້ວຍຫລາຍເຜົ່າຊົນເຊັ່ນ: ລາວ, ໄຕ, ຜູ້ໄທ, ລື້, ຍວນ, ແຊກ, ໄທເໜືອ...ນອກຈາກນັ້ນ, ແຕ່ລະເຜົ່າຍັງແຍກອອກເປັນແຊງຫລືຂະແໜງຕື່ມອີກ. ກຸ່ມຊົນພວກນີ້ມັກຕັ້ງຖິ່ນຖານທຳມາຫາ ກິນຢູ່ຕາມລ້ອງແມ່ນ້ຳຂອງ ແລະນ້ຳໃຫຍ່ທັງຫລາຍມີອາຊີບໃນການເຮັດນາ, ເຮັດໄຮ່, ປູກຝັງລ້ຽງສັດສ່ວນຫລາຍນັບຖືສາສະໜາພຸດ.ມີຮີດຄອງປະເພນີອັນດີງາມໄດ້ສືບທອດມາຮອດທຸກວັນນີ້.

2.ກຸ່ມມອນ-ຂະແມ

ກຸ່ມມອນ-ຂະແມເປັນກຸ່ມຊົນໜຶ່ງທີ່ສຳຄັນໃນຈຳນວນພົນລະເມືອງລາວ, ມີປະມານ 22%ໃນໄລຍະຜ່ານມາພວກເຮົາເຄີຍເອີ້ນວ່າ "ເຜົ່າລາວກາງ ຫລືລາວເທີງ" ຊົນເຜົ່າກຸ່ມນີ້ຖືກສັນນິຖານວ່າແມ່ນກຸ່ມຄົນດັ່ງເດີມທີ່ໄດ້ທຳມາຫາກິນໃນແຜ່ນດິນລາວ ແລະຢູ່ຫລາຍແຫ່ງໃນເຂດອາຊີອາຄະເນມາຕັ້ງແຕ່ໃດໆມາ,ສິ່ງທີ່ຢັ້ງຢືນເຖິງຄວາມສີວິໄລທາງດ້ານວັດທະນາທຳກໍ່ມີຫລາຍ ຢ່າງເປັນຕົ້ນແມ່ນ ເສົາຫີນຢູ່ແຂວງຫົວພັນ, ໄຫຫີນຢູ່ແຂວງຊຽງຂວາງ, ຄ້ອງລາງ, ຄ້ອງບັ້ງທອງ ສຳລິດທີ່ຄົ້ນພົບຢູ່ແຂວງຫລວງນ້ຳ ທາ-ແຂວງອຸດົມໄຊເປັນຕົ້ນ.

ກຸ່ມມອນ-ຂະແມ ປະກອບດ້ວຍຫລາຍຊົນເຜົ່ານ້ອຍເຊັ່ນ: ກຶມຫມຸ, ໄປຣ, ຊິງມູນ, ຜ້ອງ, ເອີຣູ, ລະແມດ, ມະກອງ, ຕຣຽງ, ຕະໂອ້ຍ, ແຢະ, ກຣຽງ...ເຂົາມັກອາໄສຢູ່ເຂດພູຕ່ຳ. ພູພຽງຢູ່ໃນລະດັບ ເໜືອທະເລ 500-1000 ແມັດມີອາຊີບເຮັດໄຮ່ເຂົ້າ, ປູກຝັງ, ໄຫ່ເນື້ອເປັນຕົ້ນຕໍ. ນອກ ຈາກນີ້ເຂົາເຈົ້າຍັງມີພາສາດ, ວັນນະຄະດີ, ສິລະປະກຳ ແລະຮີດຄອງປະເພນີວັດ ທະນາ

ທາງທີ່ຫລາກຫາກຫລາຍໄດ້ອາບຸລັກ ຮັກສາໄວ້ສືບມາເຖິງປັດຈຸບັນອັນເປັນສ່ວນສຳຄັນ ໃນການປະກອບເປັນພື້ນຖານວັດທະນາທຳຂອງຊາດລາວເຮົາໃຫ້ອຸດົມຮັ່ງມີໃນຍຸ້ນີ້ອີກດ້ວຍ

3.ກຸ່ມມົ້ງ-ຢ້າວ ແລະຕີເບດ-ພະມ້າ

ກຸ່ມຊົນດັ່ງກ່າວນີ້ໄດ້ເຄື່ອນຍ້າຍມາຈາກພາກໃຕ້ຂອງຈີນ ເຂົ້າມາສູ່ປະເທດລາວໃນລະຫວ່າງສະຕະວັດທີ່ XVII-XIX ເຂົາເຈົ້າຕັ້ງຖິ່ນຖານພູມລຳເນົາ ແລະທຳມາຫາກິນຢູ່ແຖບພູສູງ. ອາກາດໜາວ,ແຕ່ສ່ວນຫລາຍທີ່ສຸດແມ່ນຢູ່ທາງພາກເໜືອຂອງປະເທດລາວ. ໃນອາດີດເຂົາເຈົ້າມີອາຊີບໃນການເຮັດໄຮ່ເຄື່ອນທີ່, ສວນສາລີ, ສວນຝິ່ນ, ລ້ຽງສັດ. ມີປະຊາກອນປະມານ10% ຂອງພົນລະເມືອງລາວທັງໝົດ.

ກຸ່ມມົ້ງ-ຢ້າວປະກອບດ້ວຍ ມົ້ງ, ມົ້ງດຳ, ມົ້ງຂາວ, ມົ້ງລາຍ, (ມົ້ງຂຽວ)ຢ້າວເປັນຕົ້ນ. ສ່ວນກຸ່ມຕີເບດ-ພະມ້າ ເປັນຕົ້ນແມ່ນ ຫໍ້, ຫວຽດເມືອງ, ກຸ່ມດັ່ງກ່າວນີ້ເຖິງວ່າຈະເປັນກຸ່ມນ້ອຍແລະເຄື່ອນຍ້າຍມາຕາມຫລັງກຸ່ມໄຕ-ລາວ ແລະກຸ່ມມອນຂະ-ແມ ກໍ່ຕາມ, ແຕ່ເຂົາເຈົ້າກໍ່ເປັນເຜົ່າໜຶ່ງທີ່ມີພາສາ, ວັນນະຄະດີ, ຮີດຄອງປະເພນີອັນດີງາມທີ່ໜ້າຊົມຊື່ນ. ສິ່ງທີ່ສຳຄັນທີ່ສຸດກໍ່ແມ່ນການໂຮມເອົາບັນດາວັດທະນາທຳທີ່ຫລາກຫລາຍຂອງບັນດາເຜົ່າຕ່າງໆເຂົ້າໃນພື້ນຖານວັດທະນາທຳຂອງຊາດເຮົາໃຫ້ອຸດົມສົມບູນຄືດັ່ງທຸກວັນນີ້.

ລວມຄວາມແລ້ວ:ບັນດາເຜົ່າຕ່າງໆທີ່ກ່າວມາຂ້າງເທິງນີ້, ລ້ວນແຕ່ແມ່ນປະຊາຊົນພົນລະເມືອງລາວທີ່ດຳລົງຊີວິດຮ່ວມກັນເປັນເວລາດົນນານ, ເປັນວົງຄະນະຍາດລາວອັນດຽວກັນ ແລະພົນລະເມືອງລາວທຸກຄົນມີສິດເທົ່າທຽມກັນຊຶ່ງຢູ່ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ. ຍາມໃດພວກເຮົາກໍ່ຊ່ວຍເຫລືອສາມັກຄີກັນ, ຮ່ວມກັນຕໍ່ສູ້ເພື່ອປົກປັກຮັກສາແຜ່ນດິນ ແລະພັດທະນາປະເທດຊາດ. ຮ່ວມກັນແລກປ່ຽນວັດທະນາທຳ. ພວກເຮົາທຸກຄົນໄດ້ກາຍເປັນເຈົ້າຂອງປະເທດຊາດ, ເປັນເຈົ້າພາສາສິລະປະວັດທະນາທຳອັນດີງາມຂອງຕົນໄວ້ຮ່ວມກັນໃນທຸກວັນນີ້.

## II. ຈຳນວນການເພີ່ມຂຶ້ນຂອງປະຊາກອນ

ປະເທດລາວແມ່ນໜຶ່ງໃນບັນດາປະເທດທີ່ອັດຕາສ່ວນຂອງການເພີ່ມປະຊາກອນຂ້ອນຂ້າງສູງຊຶ່ງສະແດງອອກໃນຜົນຂອງການສຳຫລວດປະຊາກອນສາມຄັ້ງຜ່ານມາ ( 1985, 1995 ແລະ 2005) ຈາກຕົວເລກລະດັບການເພີ່ມຂຶ້ນຂອງປະຊາກອນແມ່ນ 25% (2005). ການທີ່ອັດຕາການເພີ່ມຂຶ້ນຂອງປະຊາກອນແບບທຳມະຊາດຢູ່ໃນລະດັບສູງເຊັ່ນນີ້ຕົ້ນຕໍແມ່ນຍ້ອນອັດຕາການເກີດສູງແຕ່ພ້ອມດຽວກັນນີ້ອັດຕາການຕາຍພັດຫຼຸດລົງໄວນັ້ນເອງ.

ຕາຕາລາງ: ການເພີ່ມປະຊາກອນລາວແບບທຳມະຊາດ

| ປີ | ອັດຕາການເກີດ(%) | ອັດຕາການຕາຍ(%) | ເພີ່ມແບບທຳມະຊາດ(%) |
|---|---|---|---|
| 1985 | 46.1 | 17.1 | 29 |
| 1995 | 41.3 | 15.1 | 26 |
| 2005 | 34.7 | 9.8 | 25 |

ຕາຕາລາງ:ສະພາບການເກີດ, ການຕາຍ, ການເພີ່ມຂອງຈຳນວນປະຊາກອນລາວ

| | ຈຳນວນເກີດ (ຄົນ) | ຈຳນວນຕາຍ (ຄົນ) | ຈຳນວນເພີ່ມ (ຄົນ) |
|---|---|---|---|
| ແຕ່ລະປີ | 196735 | 55132 | 141620 |
| ແຕ່ລະມື້ | 593 | 151 | 388 |
| ແຕ່ລະຊົ່ວໂມງ | 22 | 6 | 16 |
| ແຕ່ລະນາທີ | 0.37 | 0.10 | 0.27 |

ຖ້າຈັງວະການເພີ່ມຂຶ້ນຂອງປະຊາກອນຫາກຍັງສືບຕໍ່ປົກກະຕິຄືດັ່ງຕໍ່ໄປນີ້ ຮອດປີ 2010 ປະຊາກອນລາວຈະມີເຖິງ 6230200 ຄົນ ແລະ ຮອດປີ 2020 ອາດຈະມີເຖິງ 7261600 ຄົນ.

III **ການແຈກຢາຍຂອງປະຊາກອນລາວ**

ຈຸດພິເສດພື້ນຖານດ້ານການແຈກຢາຍຂອງປະຊາກອນລາວແມ່ນບໍ່ສະໝ່ຳສະເໝີກັນລະຫວ່າງເຂດ ທົ່ງພຽງ ແລະເຂດພູສູງ, ລະຫວ່າງຕົວເມືອງ ແລະຊົນນະບົດແລະລະຫວ່າງບັນດາແຂວງດ້ວຍກັນດັ່ງນີ້:

+ ປະຊາກອນລາວໄດ້ເຕົ້າໂຮງກັນຢູ່ເຂດທົ່ງພຽງແຄມແມ່ນ້ຳຂອງເບື້ອງຕາເວັນອອກເຊັ່ນ: ທົ່ງພຽງວຽງຈັນ, ທົ່ງພຽງສະຫວັນນະເຂດ ແລະ ທົ່ງພຽງຈຳປາສັກ. ນອກຈາກນັ້ນປະຊາກອນຍັງດຳລົງຊີວິດກະແຈກກະຈາຍຢູ່ທົ່ງພຽງນ້ອຍຕາມຮ່ອມພູ ແລະ ຢູ່ລຽບຕາມແຄມແມ່ນ້ຳທີ່ເປັນສາຂາຂອງແມ່ນ້ຳຂອງ.ນັ້ນກໍ່ຍ້ອນວ່າເຂດທົ່ງພຽງນີ້ເປັນເຂດທີ່ອຸດົມສົມບູນເໝາະແກ່ການຜະລິດກະສິກຳ, ມີຄວາມສະດວກດ້ານການຄົມມະນາຄົມ-ຂົນສົ່ງ, ອຸດສາຫະກຳ ແລະ ການບໍລິການອື່ນໆ, ພິເສດເຂດທົ່ງພຽງໃດເປັນເຂດທີ່ມີການພັດທະນາມາແຕ່ດົນນານແລ້ວ ແລະປັດຈຸບັນເຂດນີ້ກາຍເປັນເຂດເສດຖະກິດ-ສັງຄົມ-ວັດທະນະທຳ ສຳຄັນຂອງຊາດ

ຕາຕາລາງ: ຈຳນວນປະຊາກອນ, ເນື້ອທີ່ ແລະ ຄວາມໜາແໜ້ນຂອງປະຊາກອນລາວ 13/3/2005

| ລ/ດ | ຊື່ແຂວງ | ຈຳນວນພົນ (ຄົນ) | ເນື້ອທີ່ (Km$^2$) | ຄວາມໜາແໜ້ນ (ຄົນ/Km$^2$) |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 698 318 | 3 920 | 178 |
| 2 | ຜົ້ງສາລີ | 165 947 | 16 270 | 10 |
| 3 | ຫຼວງນ້ຳທາ | 145 310 | 9 325 | 16 |
| 4 | ອຸດົມໄຊ | 265 179 | 15 370 | 17 |
| 5 | ບໍ່ແກ້ວ | 145 263 | 6196 | 24 |
| 6 | ຫຼວງພະບາງ | 407 039 | 16875 | 24 |
| 7 | ຫົວພັນ | 280 938 | 16500 | 17 |
| 8 | ໄຊຍະບູລີ | 338 669 | 16389 | 21 |
| 9 | ຊຽງຂວາງ | 229 596 | 15880 | 15 |
| 10 | ວຽງຈັນ | 388 895 | 15927 | 21 |
| 11 | ບໍລິຄຳໄຊ | 255 301 | 14863 | 15 |
| 12 | ຄຳມ່ວນ | 377 390 | 16315 | 21 |
| 13 | ສະຫວັນນະເຂດ | 825 920 | 21774 | 38 |
| 14 | ສາລະວັນ | 324 327 | 10691 | 30 |
| 15 | ເຊກອງ | 84 995 | 7665 | 9 |
| 16 | ຈຳປາສັກ | 607 370 | 15415 | 39 |
| 17 | ອັດຕະປື | 112 120 | 10320 | 11 |
| 18 | ໄຊສົມບູນ | 39 423 | 4506 | 9 |
| | ລວມທັງໝົດ | 5 621 982 | 236800 | 24 |

+ ເຂດທີ່ປະຊາກອນດຳລົງຊີວິດຢູ່ເບົາບາງ ແລະ ກະແຈກກະຈາຍແມ່ນຢູ່ເຂດພູສູງທາງພາກເໜືອ, ພາກຕາເວັນອອກ, ເຂດພູພຽງທາງພາກກາງ ແລະ ພາກໃຕ້. ເຂດນີ້ເປັນເຂດທີ່ມີຊັບພະຍາກອນທຳມະຊາດຫຼາຍຊະນິດ ແຕ່ພັດເປັນເຂດທຸລະກັນດານ, ການຄົມມະນາຄົມພົບຄວາມຫຍຸ້ງຍາກຫຼາຍ, ພື້ນຖານເສດຖະກິດຂະຫຍາຍຕົວຊ້າ, ລະດັບການສຶກສາຕ່ຳ ແລະ ເປັນເຂດທີ່ຊົນເຜົ່ານ້ອຍອາໄສຢູ່.

+ ປະຊາກອນອາໄສຢູ່ຢ່າງຫລວງຫລາຍຕາມຕົວເມືອງນ້ອຍແລະໃຫຍ່ຕ່າງໆໃນທົ່ວປະເທດໂດຍສະເພາະແມ່ນບັນດາຕົວເມືອງທີ່ເປັນທີ່ຕັ້ງຫ້ອງວ່າການແຂວງແລະທີ່ຕັ້ງຫ້ອງວ່າການເມືອງເຊັ່ນ: ເມືອງຫຼວງພະບາງ, ເມືອງໄຊ, ເມືອງໂພນໂຮງ, 4ຕົວເມືອງຂອງເທດສະບານກຳແພງນະຄອນວຽງຈັນເປັນຕົ້ນ.

+ ລັກສະນະການແຈກຢາຍຂອງປະຊາກອນລາວບໍ່ສະໝ່ຳສະເໝີເຊິ່ງມັນສະແດງອອກລະຫວ່າງບັນດາແຂວງ, ບັນດາເມືອງໃຫຍ່-ນ້ອຍ ແລະລະຫວ່າງບັນດາບ້ານຕ່າງໆດ້ວຍກັນເຊັ່ນ: ແຂວງທີ່ມີປະຊາກອນຫລາຍກ່ວາໝູ່ແມ່ນແຂວງສະຫວັນນະເຂດ, ກຳແພງນະຄອນວຽງຈັນ, ຈຳປາສັກ, ຫຼວງພະບາງ...ສ່ວນແຂວງທີ່ມີພົນລະເມືອງໜ້ອຍກ່ວາໝູ່ແມ່ນເຂດພິເສດໄຊສົມບູນ ແລະ ແຂວງເຊກອງ.

## IV. ການຍ້າຍຖິ່ນຖານຂອງປະຊາກອນ

ໃນສະໄໝກ່ອນກໍ່ຄືປັດຈຸບັນສະພາບການຍ້າຍຖິ່ນຖານຂອງປະຊາກອນລາວແມ່ນມີຄວາມສັບສົນສົມຄວນແລະບັນດາເອກະສານທີ່ຈະຢັ້ງຢືນຢ່າງຊັດເຈນນັ້ນຍັງມີໜ້ອຍກະແສການເຄື່ອນຍ້າຍໃນໄລຍະຜ່ານມາຕົ້ນຕໍແມ່ນການເຄື່ອນຍ້າຍຈາກພູສູງລົງສູ່ທົ່ງພຽງ ແລະຈາກຊົນນະບົດເຂົ້າສູ່ຕົວເມືອງໃຫຍ່

ອີງຕາມການເກັບກຳຂໍ້ມູນຂອງສູນສະຖິຕິແຫ່ງຊາດໃນປີ 2005 ໄດ້ໃຫ້ຮູ້ວ່າຈຳນວນຄົນທີ່ຍົກຍ້າຍຈາກປະເທດອື່ນເຂົ້າມາລາວແມ່ນມີໜ້ອຍຄືປະມານ 500 ຄົນເທົ່ານັ້ນ ແຕ່ໃນຂະນະດຽວກັນນີ້ໄດ້ມີຜູ້ທີ່ຍ້າຍອອກໄປພັດມີຫຼາຍທີ່ສຸດຄືປະມານ 8 500 ຄົນຊຶ່ງສ່ວນຫລາຍແມ່ນການໄປຊອກວຽກເຮັດງານທຳ, ໄປສຶກສາຄົ້ນຄ້ວາ...ສະນັ້ນການຍົກຍ້າຍເຂົ້າສຸດທິຈິ່ງເປັນຄ່າລົບ.ຈຳນວນຄົນທີ່ຍ້າຍອອກໄປສ່ວນໃຫຍ່ແມ່ນບັນດາແຂວງທາງພາກໃຕ້ ເວົ້າລວມແລ້ວ 80% ຂອງຜູ້ຍົກຍ້າຍອອກໄປແມ່ນມາຈາກຊົນນະບົດ.

*ຈາກຜົນສະເລ່ຍລະຫວ່າງສອງການສຳຫຼວດປີ 1995-2005 ໄດ້ໃຫ້ຮູ້ວ່າຈຳນວນປະຊາກອນ* ປະມານ 60% ຂອງພົນລະເມືອງໄດ້ຍົກຍ້າຍຢູ່ພາຍໃນແຂວງ ແລະປະມານ 40% ຂອງການຍົກຍ້າຍໄປຫາແຂວງອື່ນ, ໃນນັ້ນປະມານ40% ແມ່ນຍົກຍ້າຍເຂົ້າມາອາໃສຢູ່ໃນນະຄອນຫລວງວຽງຈັນໂດຍກົງ.

## V. ບັນຫາຂອງປະຊາກອນ

ປະຊາກອນລາວມີອັດຕາການເພີ່ມສູງສົມຄວນ, ດັ່ງນັ້ນຈຶ່ງມີບັນຫາຫຼາຍປະການເຊັ່ນ:

- ປະຊາກອນເພີ່ມໄວ, ແຕ່ເສດຖະກິດຂະຫຍາຍຕົວຊ້າ ໂດຍສະເພາະຢູ່ເຂດຊົນນະບົດເຮັດໃຫ້ຊີວິດການເປັນຢູ່ມີຄວາມຫຍຸ້ງຍາກ. ດັ່ງນັ້ນປະຊາກອນຈຶ່ງຫຼັ່ງໄຫຼເຂົ້າສູ່ຕົວເມືອງ ແລະກໍ່ໃຫ້ເກີດບັນຫາອື່ນໆຕາມມາ

-ເດັກເກີດໃໝ່ຫຼາຍ ໄວໜຸ່ມກໍ່ຫຼາຍ, ແຕ່ດ້ານສາທາລະນະສຸກ ແລະການສຶກສາບໍ່ສາມາດຕອບສະໜອງໄດ້ທັນກັບຄວາມຕ້ອງການ, ເຮັດໃຫ້ຄຸນນະພາບດ້ານແຮງງານຂອງປະຊາກອນຂະແໜງການຜະລິດຕ່ຳເຊິ່ງເປັນອຸປະສັກຕໍ່ການຂະຫຍາຍເສດຖະກິດທີ່ຈະຕ້ອງນຳໃຊ້ເຕັກນິກວິທະຍາການທັນສະໄໝ.

- ເມື່ອປະຊາກອນເພີ່ມຂື້ນຫຼາຍຈະເຮັດໃຫ້ສິ່ງແວດລ້ອມມີບັນຫາຫລາຍຢ່າງເຊັ່ນ: ທີ່ພັກພາອາໃສຄັບແຄບ, ປະລິມານສິ່ງເສດເຫຼືອເພີ່ມຂຶ້ນ, ເກີດໄພຫວ່າງງານ ແລະບັນຫາອື່ນໆອີກ.

## VI. ສິ່ແວດລ້ອມໃນຍຸກສະໄໝກ່ອນ-ປັດຈຸບັນ

ໃນເມື່ອກ່ອນສິ່ງແວດລ້ອມໂດຍທົ່ວໄປແລ້ວຈະມີການຂຸດໂຊມແລະຖືກທຳລາຍໜ້ອຍຫຼືອາດຈະບໍ່ຖືກທຳລາຍເລີຍ ເນື່ອງຈາກວ່າປະຊາກອນຍັງບໍ່ທັນຂະຫຍາຍຕົວແລະຕ້ອງໄດ້ເພິ່ງພາທຳມະຊາດ ໃນການດຳລົງຊີວິດອີກ.

ແຕ່ໃນປັດຈຸບັນວິທະຍາສາດແລະເຕັກໂນໂລຊີມີຄວາມກ້າວໜ້າຂຶ້ນໄປເລື້ອຍໆມະນຸດໄດ້ໃຊ້ວິທະຍາສາດແລະເຕັກໂນໂລຊີເຫຼົ່ານັ້ນເພື່ອຄວາມສະດວກສະບາຍແລະທັນການໃນການດຳລົງຊີວິດໂດຍໃຊ້ຊັບພະຍາກອນທຳມະຊາດຢ່າງບໍ່ຄຳນຶງຊຶ່ງມັນກໍ່ໃຫ້ເກີດຜົນເສຍຫາຍແລະຜົນກະທົບຫລາຍຢ່າງຕໍ່ຕົນເອງແລະສິ່ງແວດລ້ອມທັງໃນໄລຍະສັ້ນແລະໄລຍະຍາວ, ຜົນກະທົບດັ່ງກ່າວແມ່ນເນື່ອງມາຈາກການທຳລາຍສິ່ງແວດລ້ອມບໍ່ວ່າຈະເປັນເລື່ອງໃຊ້ທາດເຄມີ, ການປ່ອຍກ໊າສພິດຈາກເຄື່ອງຈັກຍານພາຫະນະຫຼືຈາກໂຮງງານອຸດສາຫະກຳ, ການປ່ອຍນ້ຳເປື້ອນສູ່ແມ່ນ້ຳ, ການຕັດໄມ້ທຳລາຍປ່າ ແລະອື່ນໆ. ສິ່ງເຫຼົ່ານີ້ລ້ວນແຕ່ມີຜົນກະທົບໂດຍກົງຕໍ່ຄຸນນະພາບຊີວິດຂອງມະນຸດ.

ດັ່ງນັ້ນເພື່ອຄຸນນະພາບຊີວິດທຸກຄົນຄວນຈະຊ່ວຍກັນປົກປັກຮັກສາສະພາບແວດລ້ອມໃຫ້ຢູ່ໃນສະພາບທີ່ດີ, ເຮັດໃຫ້ອາກາດບໍລິສຸດ, ສະຖານທີ່ຕ່າງໆໃຫ້ສະອາດງາມຕາໂດຍບໍ່ຖິ້ມສິ່ງເສດເຫຼືອຫຼືສິ່ງ

ສິກກະປົກຕ່າງໆຊະຊາຍ, ບໍ່ປ່ອຍກ໊າດພິດ ຫຼືນ້ຳເປື້ອນສູ່ແມ່ນ້ຳລຳຄອງ, ນອກຈາກນັ້ນໃນການໃຊ້ທາດເຄມີທາງການກະເສດກໍ່ຄວນໃຊ້ຢ່າງລະມັດລະວັງ ແລະບໍ່ຄວນຕັດໄມ້ທຳລາຍປ່າ, ຄວນຈະຊ່ວຍກັນອານຸລັກຊັບພະຍາກອນທຳມະຊາດໃຫ້ຍືນຍົງ ຫຼືໃຊ້ໃຫ້ກຸ້ມຄ່າ
ແລະສິ່ງສຳຄັນຄວນຈະຊ່ວຍກັນປູກປ່າເພື່ອທົດແທນ.

## ເອກະສານອ້າງອີງ


1. ປື້ມວັດທະນາທຳລາວ ສຳລັບວິທະຍາໄລວິທະຍາສາດພື້ນຖານ . ພິມອອກປີ 2006
2. ປື້ມລາວສຶກສາ1 ສຳລັບວິທະຍາໄລວິທະຍາສາດພື້ນຖານ. ພາກສຶກສາປະຊາກອນລາວ ໂດຍ ດຣ ຄຳມະນີ ສຸລິເດດ
3. ປື້ມພູມສາດ ຊັ້ນມັດທະຍົມສຶກສາປີທີ່ 6 ຮຽບຮຽງໂດຍ: ສີທາ ພັນທະບາ ພິມອອກປີ 2005
4. ປື້ມວິທະຍາສາດທຳມະຊາດ ຊັ້ນມັດທະຍົມປີທີ່ 3 ຮຽບຮຽງໂດຍ: ເພັດສະໝອນ ຄຳບຸນພັນ